ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

## ຜ-ຟຟລ ຮັບລາງວັນ FinanceAsia Achievement Awards 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ(ຜ-ຟຟລ) ໄດ້ຮັບລາງວັນ FinanceAsia Achievement Awards ປະຈໍາປີ 2018, ໃນສາຂາ Best Laos Deal, EDL-Generation’s 13,7 Billion baht ($410 million) multi-tranche bond ຫຼື ການລະດົມທຶນດີເດັ່ນຂອງປະເທດລາວ ຈາກການອອກຈໍາໜ່າຍຮຸ້ນກູ້ສະກຸນເງິນບາດມູນຄ່າ 13,7 ຕື້ບາດ (ຫຼື 410 ລ້ານໂດລາສະຫະລັດ). ພິທີມອບຮັບລາງວັນໄດ້ຈັດຂຶ້ນໃນວັນທີ 13/02/2019 ທີ່ໂຮງແຮມ Grand Hyatt, ຮົງກົງ. ລາງວັນດັ່ງກ່າວເປັນລາງວັນທໍາອິດທີ່ FinanceAsia ມອບໃຫ້ປະເທດລາວ. ລາງວັນ FinanceAsia Achievement Awards ຈັດຂຶ້ນເພື່ອຮັບຮູ້ແລະສະເຫລີມສະຫລອງຜົນສໍາເລັດຂອງການລະດົມທຶນຂອງບັນດາບໍລິສັດທີ່ພົ້ນເດັ່ນໃນທະວີບອາຊີ.

ໃນພິທີຮັບລາງວັນອັນຊົງກຽດ ແລະ ມີຄວາມຫມາຍສໍາຄັນໃນຄັ້ງນີ້, ຕາງຫນ້າ ຜ-ຟຟລ ແມ່ນນໍາໂດຍ ທ່ານ ປອ. ບຸນສະຫຼອງ ສຸດທິດາຣາ, ຮອງຜູ້ອໍານວຍການໃຫຍ່ ຜ-ຟຟລ, ພ້ອມດ້ວຍຕາງຫນ້າຈາກ ທະນາຄານຮ່ວມຈັດຈໍາຫນ່າຍຮຸ້ນກູ້ ແລະ ທີ່ປຶກສາການເງິນແລະກົດຫມາຍ ທີ່ມີສ່ວນຮ່ວມເຮັດໃຫ້ການອອກຮຸ້ນກູ້ຂອງ ຜ-ຟຟລ ໃນປີ 2018 ໄດ້ຮັບຜົນສໍາເລັດຢ່າງຈົບງາມ.




ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la